## ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 26 ເມສາ 2020 (4-26-2020)**

---

# ຄວາມຮັກ

***ແມ່ນອາຫານປະເພດໃດທີ່ທ່ານມັກທີ່ສຸດຊຶ່ງດຶງອອກມາຈາກເຕົາອົບໃໝ່ໆ?***

***ຈຸດສຳຄັນໃນບົດຮຽນ:*** *ຈົ່ງໃຫ້ຄວາມຮັກເຈາະຊຶມເຂົ້າໄປໃນທຸກໆສາຍສຳພັນ.*

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບໍ່ມີຜູ້ໃດມັກສົ້ນແຂງໆຂອງເຂົ້າຈີ່. ຂ້າພະເຈົ້າມີລູກສີ່ຄົນຊຶ່ງສາມາດເອົາການໂຕ້ຖຽງກັນເປັນເກມກິລາກໍໄດ້, ແຕ່ວ່າເຣື່ອງສົ້ນແຂງຂອງເຂົ້າຈີ່ບໍ່ແມ່ນສິ່ງທີ່ພວກເຂົາຈະຍາດແຍ່ງກັນ. ໃນຫຼາຍໆປີທີ່ຂ້າພະເຈົ້າໄດ້ເປັນພໍ່ຂອງພວກເຂົາ, ບໍ່ເຄີຍມີລູກຄົນໃດທີ່ຮ້ອງອອກມາວ່າ: "ບໍ່, ລູກຢາກໄດ້ຕ່ອນຂອບໆ, ຕ່ອນແຫ້ງເກົ່າໆ, ແຂງຄືກະດາດນັ້ນ!" ບໍ່ເຄີຍມີຈັກເທື່ອ. ເດັກນ້ອຍມັກຂອງສົດໆໃໝ່ໆ. ແລະພວກຜູ້ໃຫຍ່ກໍເຊັ່ນດຽວກັນ.

ສາຍສຳພັນຕ່າງໆກໍຄ້າຍຄືກັບສົ້ນແຂງຂອງເຂົ້າຈີ່. ດົນນານໄປມັນກໍແຂງຕົວຂຶ້ນແລະກາຍເປັນຂອງເກົ່າ. ແຕ່ວ່າຊີວິດແຕ່ງງານແລະສາຍສຳພັນແບບເພື່ອນມິດບໍ່ໄດ້ໄປຕາມຮູບແບບອັນນີ້. ຂອບຄຸນພຣະເຈົ້າ, ພຣະຄັມພີໃຫ້ແບບແຜນທີ່ແນ່ນອນຊັດເຈນແກ່ພວກເຮົາໃຫ້ຮັກສາການຕິດຕໍ່ພົວພັນກັບຄົນອື່ນໆຈາກຄວາມຈືດຈາງ. ຖ້າວ່າທ່ານຫາກເປັນຜູ້ຕິດຕາມພຣະເຢຊູຄຣິດ, ທ່ານມີພະລັງໃນການຜລິດຄວາມສົດໃສອັນໜ້າອັສຈັນໃນຊີວິດຂອງຄົນອື່ນໆ. ແບບແຜນອັນນີ້ແມ່ນສຳລັບການເຕີບໂຕໃຫ້ສາຍສຳພັນແໜ້ນໜາຂຶ້ນເປັນທີ່ຮັບຮອງໄດ້ຮ້ອຍເປີເຊັນ, ແຕ່ບໍ່ແມ່ນໄດ້ລ້າໆ. ການຕິດຕໍ່ພົວພັນອັນເລິກເຊິ່ງນີ້ກໍຄືຄວາມຮັກ.

ທ່ານຜິດຫວັງຕໍ່ທາງສາຍສຳພັນຂອງທ່ານທີ່ປາກົດອອກມາບໍ່? ທ່ານເມື່ອຍລ້າໃນການເຫັນຄົນອື່ນຍ່າງອອກຈາກຊີວິດຂອງທ່ານບໍ່? ທ່ານມຸ້ງຫວັງຢາກໃຫ້ຄວາມສຳພັນໄປໄກກັບພວກທີ່ຢູ່ອ້ອມຮອບທ່ານບໍ່? ຖ້າຫາກແມ່ນ, ຈົ່ງຟັງຄຳຂອງພຣະເຢຊູຂນະທີ່ພຣະອົງໄດ້ອະທິບາຍພະລັງແຫ່ງຄວາມຮັກ.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3 )**

***<u>ການສຶກສາພຣະຄັມພີ</u>***

**1. ໂຢຮັນ 15:9-10**

*9.* ພຣະບິດາໄດ້ຊົງຮັກເຮົາຢ່າງໃດ ຝ່າຍເຮົາໄດ້ຮັກພວກທ່ານຢ່າງນັ້ນເໝືອນກັນ ຈົ່ງຕັ້ງຢູ່ໃນຄວາມຮັກຂອງ
ເຮົາ. *10.* ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ ເໝືອນດັ່ງເຮົາ
ໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ.

ຂ້າພະເຈົ້າຕື່ນນອນໃນເຊົ້າມື້ນຶ່ງທີ່ຢາກດື່ມກາເຟຢ່າງຮຸນແຮງຈົນຂ້າພະເຈົ້າລຸກຈາກບ່ອນນອນແລະຮີບໄປຫາເຕົ້າຕົ້ມກາເຟ. (ຕົວຈິງແລ້ວ, ຂ້າພະເຈົ້າເຮັດແບບນີ້ທຸກໆມື້.) ຈອກກາເຟນຶ່ງໃຊ້ເວລາ 30 ວິນາທີພຸ້ນບໍ? ເອີ, ມັນກໍໂພດເກີນໄປ. ຂນະທີ່ຂ້າພະເຈົ້າຢືນຢູ່ບ່ອນນັ້ນຢ່າງຈົດຈໍ່, ລໍຖ້າສິ່ງທີ່ຮ້ອນໆແລະແຊບທີ່ຈະເກີດຂຶ້ນ, ຂ້າພະເຈົ້າໄດ້ຮັບຮູ້ຢ່າງໄວວາວ່າເຕົ້າຕົ້ມກາເຟມັນກຳລັງທຳການປະທ້ວງຢູ່. ໜ້າຈໍນ້ອຍໆຂອງໝໍ້ຕົ້ມກາເຟບອກວ່າ: ເຕົ້ານ້ຳຂອງເຈົ້າມັນແຫ້ງ. ມັນຕ້ອງການນ້ຳ. ໃນທັນໃດນັ້ນ, ຂ້າພະເຈົ້າກໍໄດ້ຖອກນ້ຳໃສ່ເພື່ອວ່າບາງຢ່າງທີ່ສວຍງາມກໍຈະໄຫຼອອກມາ.

ພຣະເຢຊູໄດ້ກ່າວຢ່າງຈະແຈ້ງໃນໂຢຮັນ 15 ວ່າມີບ່ອນເກັບນ້ຳທີ່ໃຫຍ່ທີ່ມະຫາສະໝຸດເປັນມະຫາສະໝຸດຂອງຄວາມຮັກ, ແຕ່ມັນບໍ່ໄດ້ເລີ່ມຕົ້ນຈາກພວກເຮົາ. ຄວາມຮັກພົບຢູ່ໃນພຣະເຈົ້າ. ພວກເຮົາຕ້ອງດື່ມຈາກນ້ຳສ້າງເລິກຊຶ່ງເປັນເຄື່ອງໃຊ້ຂອງພຣະບິດາແຫ່ງສວັນ ຖ້າຫາກພວກເຮົາເຄີຍມີຄວາມຫວັງທີ່ຈະຖອກເທສິ່ງທີ່ມີຄວາມໝາຍໃສ່ຊີວິດຂອງຄົນອື່ນໆ. ຂ້າພະເຈົ້າຂໍເວົ້າມັນໃນທຳນອງນີ້: ຄຸນນະພາບຂອງຄວາມສຳພັນຂອງທ່ານກັບຄົນອື່ນຈະຜູກພັນກັນຢູ່ສເມີກັບຄຸນນະພາບສາຍສຳພັນຂອງທ່ານກັບພຣະເຈົ້າ.

| ພວກເຮົາມັກທີ່ຈະຄາດຫວັງຫຍັງຈາກຄົນທີ່ຮັກເຮົາ? |
|---|

ໃຫ້ໃສ່ໃຈພິເສດຕໍ່ຄຳວ່າ " ຕັ້ງຢູ່" ໃນພຣະຄຳຕອນນີ້. ນີ້ແມ່ນຄຳເວົ້າທີ່ສຳຄັນໃນໂຢຮັນ 15. ການຕັ້ງຢູ່ບ່ອນໃດບ່ອນນຶ່ງແມ່ນການອາໄສຢູ່ບ່ອນນັ້ນຕລອດເວລາ; ບ່ອນທີ່ທ່ານຍັງຄົງຕັ້ງຢູ່ແມ່ນບ່ອນທີ່ທ່ານສະດວກສະບາຍພໍທີ່ຈະເຮັດເປັນເຮືອນໃຫ້ຕົວທ່ານເອງຢູ່. ພຣະເຢຊູໄດ້ຊັກຊວນຜູ້ຕິດຕາມຂອງພຣະອົງໃຫ້ຮັກສາຊີວິດຂອງເຂົາເຈົ້າໃຫ້ສົດຊື່ນໂດຍການຢູ່ຢ່າງໃກ້ຊິດ, ໂດຍການເຮັດໃຫ້ຕົວເອງຢູ່ເຮືອນແຫ່ງຄວາມຮັກຂອງພຣະອົງ. ຜູ້ຕິດຕາມຂອງພະເຢຊູແນ່ນອນວ່າອາດຈະບັນລຸຄວາມສນິດສນົມກົມກຽວກັບພຣະເຢຊູທີ່ໄດ້ອະທິບາຍຢູ່ນີ້ໂດຍການອະທິຖານແລະສຶກສາພຣະຄັມພີເປັນປະຈຳ, ແຕ່ການເຊື່ອຟັງຢ່າງສັດຊື່ຕໍ່ພຣະວິນຍານຂອງພຣະເຈົ້າແລະພຣະຄຳຂອງພຣະອົງຄືກຸນແຈ.

ການເຊື່ອຟັງພຣະເຈົ້າແມ່ນປັດໃຈທີ່ສຳຄັນໃນການເກີດໝາກຜົນໃນຊີວິດຂອງຄົນອື່ນໆ. ສັງເກດວິທີທີ່ພຣະເຢຊູຜູກມັດຢ່າງແໜ້ນແຟ້ນລະຫວ່າງຄວາມຮັກແລະການເຊື່ອຟັງ:" ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ" (ຂໍ້ 10). ຖ້າວ່າທ່ານເຮັດໃນສິ່ງທີ່ພຣະເຢຊູບອກໃຫ້ທ່ານເຮັດ, ຫຼັງຈາກນັ້ນທ່ານກໍຈະຮູ້ສຶກຢ່າງເຕັມພະລັງແຫ່ງຄວາມຮັກຂອງພຣະອົງ! ມັນບໍ່ແມ່ນວ່າພຣະເຢຊູຈະຮັກທ່ານຫຼາຍຂຶ້ນ-ພຣະເຈົ້າໄດ້ຮັກທ່ານຮຽບຮ້ອຍແລ້ວ-ແຕ່ທ່ານຈະຮູ້ຈັກແລະປະສົບການກັບຄວາມຮັກນັ້ນຢ່າງເລິກເຊິ່ງ. ຄຳໝັ້ນສັນຍາຂອງທ່ານຕໍ່ຂໍ້ຄຳສັ່ງຂອງພຣະເຢຊູເປັນສິ່ງສຳຄັນທີ່ສຸດໃນການສ້າງຊີວິດໃນພວກທີ່ອ້ອມຮອບທ່ານ.

ການຮັກສາຕົວໄວ້ໃນຄວາມຮັກຂອງພຣະເຢຊູແມ່ນກະແຈສຳລັບຄວາມສຳເລັດທຸກຢ່າງ, ໂດຍສະເພາະແມ່ນການພົວພັນກັບຄົນອື່ນ. ຜູ້ຕິດຕາມຂອງພຣະອົງຕ້ອງຍອມຮັບເອົາຄຸນຄ່າຂອງພຣະອົງແລະເຮັດຕາມສຽງຂອງພຣະອົງ. ເມື່ອພວກເຮົາບໍ່ສົນໃຈ ຄຳເວົ້າແລະການກະຕຸ້ນຂອງພຣະວິນຍານບໍລິສຸດແລະວາງແຜນເສັ້ນທາງທີ່ເຫັນແກ່ຕົວຂອງພວກເຮົາ, ພວກເຮົາບໍ່ເຊື່ອຟັງ, ພວກເຮົາທຳລາຍຜົນສຳເລັດສ່ວນຕົວຂອງພວກເຮົາ, ແລະພວກເຮົາກໍ່ກວນຄົນທີ່ຢູ່ອ້ອມຂ້າງພວກເຮົາ. ພວກເຮົາຕ້ອງຢູ່ໃກ້ພຣະຜູ້ເປັນເຈົ້າ.

## 2. ໂຢຮັນ 15:11-12

*11.* ຂໍ້ຄວາມເຫຼົ່ານີ້ເຮົາໄດ້ບອກທ່ານທັງຫຼາຍແລ້ວ ເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ*. 12. 'ນີ້ແຫຼະ,* ເປັນຂໍ້ບັນຍັດຂອງເຮົາ ຄືໃຫ້ທ່ານທັງຫຼາຍຮັກກັນແລະກັນເໝືອນດັ່ງເຮົາໄດ້ຮັກພວກທ່ານ*.*

ທ່ານເຄີຍພົບກັບຊາຍຄົນນຶ່ງທີ່ອ້າງວ່າຕົນເປັນຄຣິສຕຽນແຕ່ແຍກບໍ່ອອກສີໜ້າຂອງລາວບໍ? ອາທິດແລ້ວອາທິດເລົ່າ, ທີ່ລາວຍ່າງຢ່າງເຊື່ອງຊ້າເຂົ້າໄປໃນຕຶກໂບດທີ່ໃບໜ້າຂຶມແລະໜ້າບຶດບຶ້ງຂຶງຄຽດ (ບໍ່ພໍໃຈໃນສິ່ງໃດສິ່ງໜຶ່ງ, ໜ່າຍ) ແລະເຮັດໃຫ້ຕັ່ງມ້ານັ່ງຂອງລາວເປັນແຖວຊື່ໄປ. ລາວແມ່ນຄົນສອງໜ້າ.

ການມີຊີວິດຢູ່ໃນພຣະຄຣິດຄວນສ້າງຄວາມສຸກໃນຫົວໃຈ! ການເຊື່ອຟັງພຣະອົງບໍ່ແມ່ນການອອກກຳລັງກາຍທີ່ຍິ້ມແຍ້ມແຈ່ມໃສ. ຂ້ອນຂ້າງກົງກັນຂ້າມ! ໃນຂໍ້ທີ 11, ພຣະເຢຊູໄດ້ກ່າວວ່າ, "ເຮົາໄດ້ບອກທ່ານທັງຫຼາຍແລ້ວເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ." ຄວາມສຸກຂອງພຣະເຢຊູຢູ່ພາຍໃນທ່ານບໍ? ຖ້າເປັນດັ່ງນັ້ນ, ການຍອມຢູ່ໃຕ້ພຣະຄຣິດບໍ່ແມ່ນເສັ້ນທາງແຫ່ງຄວາມທຸກທໍລະມານ, ແຕ່ເປັນເສັ້ນທາງ

ໄປສູ່ເສລີພາບ. ເມື່ອທ່ານຮູ້ວ່າໜີ້ຂອງທ່ານຖືກຈ່າຍແລ້ວແລະບາບຂອງທ່ານຖືກລຶບອອກ, ທ່ານກໍຍ່າງໄປດ້ວຍການແບກພາລະທີ່ເບົາຫຼາຍກວ່າ.

ທ່ານສະແດງຄວາມສຸກຂອງພຣະວິນຍານບໍ? ທັດສະນະຂອງທ່ານໃນຊີວິດເຮັດໃຫ້ລົດຊື່ນກັບຄົນອ້ອມຂ້າງບໍ? ຖ້າບໍ່ດັ່ງນັ້ນ, ຂໍໃຫ້ພຣະຜູ້ເປັນເຈົ້າໃນມື້ນີ້ຟື້ນຟູຄວາມສຸກຂອງຄວາມລອດຂອງທ່ານ (ເພງສັນລະເສີນ 51:12). ຂໍໃຫ້ສັງເກດໃນໂຢຮັນ 15:12 ວ່າເມື່ອຄວາມຮັກຂອງພຣະເຢຊູສະຖິດຢູ່ພາຍໃນທ່ານ, ມັນຈະບໍ່ສາມາດຖືກຂັງຂື້ນໄດ້. ຄວາມຮັກຂອງພຣະຄຣິດຕ້ອງຫຼັ່ງໄຫຼເຂົ້າມາໃນແລະນອກທ່ານ: " ນີ້ແຫຼະ, ເປັນຂໍ້ບັນຍັດຂອງເຮົາ ຈົ່ງຮັກຊຶ່ງກັນແລະກັນຄືກັນກັບທີ່ເຮົາໄດ້ຮັກພວກທ່ານ." ຂອງປະທານແຫ່ງຄວາມຮັກຂອງພຣະຄຣິດມາພ້ອມກັບຄໍາແນະນໍານີ້: ແບ່ງປັນ! ພວກເຮົາຖືກບັນຊາໃຫ້ຮັກຄົນທີ່ຢູ່ອ້ອມຂ້າງພວກເຮົາໃນແບບດຽວກັບທີ່ພຣະເຢຊູໄດ້ຮັກພວກເຮົາ. ໃນຖານະທີ່ເປັນຜູ້ໄດ້ຮັບມໍລະດົກທີ່ອຸດົມສົມບູນ, ພວກເຮົາບໍ່ຄວນຫຼອກລວງພຣະຄຸນ; ແທນທີ່ພວກເຮົາຈະໄດ້ຮັບສິດແລະເຂັ້ມແຂງເພື່ອໃຫ້ພຣະຄຸນແກ່ຄົນອື່ນ.

ພຣະເຢຊູບໍ່ໄດ້ປະຄໍາສັ່ງໃຫ້ຮັກແບບມົວໆຫຼືບໍ່ແຈ່ມແຈ້ງ. ພຣະອົງໄດ້ຊີ້ນໍາພວກເຮົາໃຫ້ຮັກຜູ້ຄົນໃນແບບທີ່ສະເພາະທີ່ພຣະອົງຮັກ. ພຣະເຢຊູສະແດງຄວາມຮັກຂອງພຣະອົງແນວໃດ? ພຣະອົງໄດ້ເອົາໃຫ້. ພຣະອົງໄດ້ໃຫ້ອະພັຍ. ພຣະອົງຍົກໂທດໃຫ້. ພຣະອົງມີຄວາມກະລຸນາ, ນໍ້າໃຈດີ, ມີເມດຕາ, ເສັຽສະລະ, ແລະມີເຈດຕະນາ. ເມື່ອທ່ານຮັກຜູ້ຄົນເໝືອນກັບທີ່ພຣະເຢຊູຮັກ, ທ່ານກໍ່ເລີ່ມທໍາລາຍກໍາແພງປ້ອງກັນຂອງພວກເຂົາ. ເຖິງແມ່ນວ່າເປືອກແຂງຂອງຫອຍກໍສາມາດເລີ່ມຕົ້ນທີ່ຈະແຕກແລະພວກເຂົາເປີດຊີວິດທີ່ສັບສົນຂອງພວກເຂົາໃຫ້ທ່ານ. ປະກາຍໄຟຂອງສາຍສໍາພັນໄດ້ຖືກພົບເຫັນໃນຊ່ວງເວລາແຫ່ງຄວາມຮັກທີ່ບໍ່ຄາດຄິດເຫຼົ່ານີ້.

| ຄວາມສໍາພັນຂອງເຮົາກັບພຣະເຈົ້າມີຜົນກະທົບແນວໃດຕໍ່ຄວາມສໍາພັນຂອງເຮົາກັບຄົນອື່ນ? |
|---|

## 3. ໂຢຮັນ 15:13-14

*13. ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້ ຄືການທີ່ຜູ້ນຶ່ງຈະໄດ້ສລະຊີວິດຕາງມິດສະຫາຍຂອງຕົນ. 14. ຖ້າທ່ານທັງຫຼາຍເຮັດຂໍ້ທີ່ເຮົາໄດ້ບັນຍັດໄວ້ ພວກທ່ານກໍເປັນມິດສະຫາຍຂອງເຮົາ.*

ທຸກໆປີໃນຕອນບ່າຍຂອງວັນແມ່, ຊາຣລີ ແລ່ນຍ່າງຮີບດ່ວນໄປທີ່ຮ້ານຄ້າໃກ້ບ້ານທີ່ສຸດໃນການຊອກຫາບັດໃນນາທີ-ສຸດທ້າຍ. ໂດຍມີພຽງແຕ່ 3 ບັດເກົ່າໆທີ່ເຫຼືອຫ້ອຍຢູ່ເທິງຫ້າງ, ລາວຈໍາເປັນຕ້ອງໄດ້ຊື້ບັດຮູບກາຕູນທີ່ຍັດເຂົ້າຊອງທີ່ບໍ່ຖືກຂະໜາດແບບບໍ່ເຂົ້າທ່າເຂົ້າທາງ. ເຖິງຢ່າງໃດກໍຕາມ, ລາວກໍຄິດໃນໃຈວ່າ, ເອີ, ຢ່າງໜ້ອຍກໍໄດ້ຫຸ້ມເທຈົນສຸດແລ້ວ.

ຕົວຢ່າງນີ້ເຮັດໃຫ້ມີສອງສາມຄໍາຖາມທີ່ກ່ຽວຂ້ອງ: ແມ່ນຫຍັງຄືພະລັງງານຈໍານວນໜ້ອຍທີ່ສຸດທີ່ຕ້ອງຈ່າຍຄ່າຂອງຄວາມຮັກ? ລາຄາເທົ່າໃດທີ່ຄົນເຮົາຕ້ອງຈ່າຍເພື່ອຫວັງວ່າຈະມີຄວາມສໍາພັນທີ່ດີກັບຄົນອື່ນ?

ພຣະເຢຊູຕັ້ງລາຄາໄວ້ສູງ, ກົດຄວາມຮັກແມ່ນການເສັຽສະລະສູງສຸດ. ວິທີທີ່ດີທີ່ສຸດໃນການສ້າງຄວາມສໍາພັນບໍ່ແມ່ນໂດຍການສົ່ງບັດທີ່ຖືກລົດລາຄາ. ກົງກັນຂ້າມ, ວິທີການສ້າງຄວາມສໍາພັນມັກຈະຜ່ານຄວາມເຈັບປວດແລະຄວາມທຸກ. ທ່ານເຕັມໃຈຫຼາຍປານໃດທີ່ຈະອົດທົນຕໍ່ຄວາມເຈັບປວດເພື່ອຄົນອື່ນໆ? ນີ້ແມ່ນເຄື່ອງວັດແທກຄວາມຮັກຂອງທ່ານຕໍ່ພວກເຂົາເຈົ້າ.

| ທ່ານໄດ້ປະສົບກັບຄວາມສຸກຂອງການຮັກຄົນອື່ນດັ່ງທີ່ພຣະຄຣິດຮັກທ່ານແນວໃດ? |
|---|

"ບໍ່ມີຜູ້ໃດມີຄວາມຮັກໃຫຍ່ກວ່ານີ້: ຄືການທີ່ຜູ້ນຶ່ງຈະໄດ້ສລະຊີວິດຕາງມິດສະຫາຍຂອງຕົນ." (ຂໍ້ທີ 13). ພວກສາວົກຮູ້ໜ້ອຍນຶ່ງວ່າ, ເຖິງແມ່ນວ່າພຣະເຢຊູໄດ້ສອນພວກເຂົາໃນການຮັກ, ສິ່ງນີ້ຈະຖືກດໍາລົງຊີວິດຂອງພວກເຂົາເອງ.

ໃນຫຼາຍໆປີຕໍ່ມາ, ພວກທີ່ຢູ່ໃນວົງພາຍໃນຂອງພຣະເຢຊູຈະເສັຽສະລະທັງໝົດເພື່ອພຣະຜູ້ຊ່ວຍໃຫ້ລອດຂອງພວກເຂົາ. ຍົກຕົວຢ່າງ, ຢາໂກໂບ, ອ້າຍຂອງໂຢຮັນ, ໄດ້ຖືກປະຫານຊີວິດດ້ວຍດາບເພາະຄວາມຕັ້ງໃຈຂອງທ່ານຕໍ່ພຣະເຢຊູ (ກິດຈະການ 12:2). ປະຫວັດສາດຂອງຄຣິສຕະຈັກຊີ້ໃຫ້ເຫັນວ່າ, ຍົກເວັ້ນໂຢຮັນ (ແລະແນ່ນອນຢູດາອິດສະກາລີໂອດ), ອັກຄະສາວົກຂອງພຣະເຢຊູໄດ້ຮັບຄວາມຕາຍຍ້ອນຄວາມເຊື່ອຂອງພວກເຂົາ. ພວກເຂົາເຕັມໃຈທີ່ຈະເສັຽຊີວິດເປັນການວັດແທກຂອງຄວາມຮັກຂອງພວກເຂົາຕໍ່ຜູ້ນຳຂອງພວກເຂົາ. ພວກຊາຍເຫຼົ່ານີ້, ຜູ້ທີ່ເຄີຍປົບໜີຈາກດາບ (ມາລະໂກ 14: 46-50), ດຽວນີ້ໄດ້ສະແດງຄວາມຮັກອັນສູງສຸດໂດຍການຈັດວາງຊັບສົມບັດຂອງໂລກຄືຮ່າງກາຍຂອງພວກເຂົາເຈົ້າເອງ. ບໍ່ເຄີຍຮູ້ຈັກຄວາມຮັກແບບໃດທີ່ສູງກວ່ານີ້ອີກ.

ຈົ່ງກວດສອບທຸກໆສາຍພົວພັນໃນຊີວິດຂອງທ່ານ. ຖາມຕົວເອງດ້ວຍຄຳຖາມທີ່ຍາກ, ແລະຊື່ສັດ. ຄວາມສຳພັນຂອງທ່ານກັບຄູ່ສົມລົດຂອງທ່ານເຂັ້ມແຂງເທົ່າໃດ? ກັບລູກໆຂອງທ່ານ? ກັບຄອບຄົວເພີ້ມເຕີມຂອງທ່ານ? ກັບໝູ່ຄູ່ເພື່ອນຝູງ? ມີຄວາມສຳພັນໃດໜຶ່ງທີ່ຈຳເປັນຕ້ອງປັບປຸງບໍ? ຖ້າເປັນດັ່ງນັ້ນ, ທ່ານຈະເຕັມໃຈຈ່າຍຫຍັງເພື່ອຄວາມສຳພັນຈະດີຂື້ນ? ທ່ານສາມາດເສັຽສະລະຫຍັງແດ່ເພື່ອຈະຊ່ວຍຊີວິດຄົນເຫຼົ່ານີ້ທີ່ມີຄວາມສຳຄັນຕໍ່ທ່ານ?

ໃຫ້ຂ້າພະເຈົ້າມອບຄຳແນະນຳນ້ອຍໆຊິ້ນໜຶ່ງ. ຂນະບາງຄັ້ງມັນເປັນເລື່ອງສລາດທີ່ຈະຫຼີກລ້ຽງ "ການກະວົນກະວາຍຂອງສິ່ງເລັກນ້ອຍ," ວິທີການນີ້ບໍ່ຄວນຈະຈຳເປັນນຳມາໃຊ້ໃນຄວາມສຳພັນ. ສິ່ງເລັກນ້ອຍກໍເປັນບັນຫາຕໍ່ສາຍສຳພັນຂອງທ່ານ. ຄວາມເຕັມໃຈທີ່ຈະຕາຍແທນຕໍ່ພວກທີ່ເຮົາຮັກສ່ວນຫຼາຍໝາຍເຖິງຄວາມຈຳເປັນໃນແຕ່ລະມື້ທີ່ຕ້ອງລະງັບຄວາມຄິດວ່າເຮົາເອງ-ສຳຄັນແລະສຶກສາຊີວິດຂອງພວກທີ່ຢູ່ອ້ອມຕົວເຮົາ. ແມ່ນຫຍັງຄືສິ່ງທີ່ບຸກຄົນນັ້ນຕ້ອງການທີ່ທ່ານຈະຕອບສະໜອງໄດ້? ຂ້ອຍສາມາດຂຽນຂໍ້ຄວາມເພື່ອໜູນນ້ຳໃຈເພື່ອໃຫ້ຍົກຫົວຂອງລາວຂຶ້ນບໍ? ຂ້ອຍສາມາດແບ່ງປັນອາຫານເພື່ອໃຫ້ລາວອີ່ມທ້ອງບໍ່? ຂ້ອຍສາມາດອາສາຮັບເອົາເດັກນ້ອຍມື້ໜຶ່ງຈາກນາງເພື່ອໃຫ້ນາງມີຄວາມສະຫງົບໃຈຄືນໃໝ່ບໍ? ຄວາມຮັກເອີ້ນພວກເຮົາໃຫ້ຈ່າຍຄ່າລາຄາ - ບາງຄັ້ງກໍຂະໜາດໃຫຍ່, ບາງຄັ້ງກໍຂະໜາດນ້ອຍ - ສຳລັບຄົນອື່ນໆ.

| |
|---|
| ແມ່ນຫຍັງຄືບາງຫົນທາງທີ່ກຸ່ມຂອງພວກເຮົາສາມາດສະແດງຄວາມຮັກທີ່ມີການເສັຽສະລະຕໍ່ຄົນອື່ນໆ? |

## <u>**ນຳໃຊ້ໃນຊີວິດ:**</u>

ນີ້ແມ່ນຄວາມຄິດສາມຢ່າງເພື່ອເພີ່ມລະດັບຄວາມຮັກຂອງທ່ານໃນຊີວິດຂອງຄົນອື່ນ. ເລືອກນຶ່ງໃນການນຳໃຊ້ຕໍ່ໄປນີ້:

- ໃຫ້ຂອງຂວັນນ້ອຍ. ໃຫ້ຂອງຂວັນທີ່ບໍ່ໄດ້ຄາດຫວັງຄືນໃຫ້ແກ່ຜູ້ທີ່ຕ້ອງການ. ຕິດຄັດຂໍ້ຄວາມງ່າຍໆນີ້ວ່າ: "ຂອບໃຈທີ່ທ່ານໄດ້ສະແດງບົດບາດສຳຄັນໃນຊີວິດຂອງຂ້ອຍ."
- ຕິດຕໍ່. ຄິດເຖິງຄວາມສຳພັນທີ່ກາຍເປັນຂອງເກົ່າຫຼືແມ່ນແຕ່ເປັນສັດຕຣູ. ໂທລະສັບຫາເພື່ອເບິ່ງວ່າທ່ານສາມາດປັບປຸງຫຼືເຊື່ອມຕໍ່ຂຶ້ນໃໝ່ໄດ້.
- ເຮັດການເສັຽສະລະອັນໃຫຍ່. ຄິດເຖິງບາງສິ່ງບາງຢ່າງທີ່ກີດຂວາງຄວາມສະໜິດສະໜົມທີ່ສຸດຂອງທ່ານ - ສະໂມສອນກ໊ອບ, ນັດເສີມສວຍ, ນັດໂທລະທັດເຄໂບ, ຈ່າຍຮອດອົດ, ແລະອື່ນໆ. ແລ້ວກໍກຳຈັດມັນ!

ເໝືອນດັ່ງສົ້ນແຂງຂອງເຂົ້າຈີ່, ຄວາມສຳພັນຂອງພວກເຮົາສາມາດກາຍເປັນຂອງເກົ່າ, ແຂງ, ແລະແປ ໆ. ຄວາມຮັກຮຽກຮ້ອງໃຫ້ມີຄວາມສົດຊື່ນຢ່າງຕໍ່ເນື່ອງເພື່ອຈະສືບຕໍ່ມີສຸຂະພາບທີ່ດີ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA